# <u>ບາງຄວາມຮູ້ພື້ນຖານກ່ຽວກັບວຽກງານປະກັນສັງຄົມ</u>

ໂດຍ: ປະເດີມພອນ ສິນທະນີ

ການກຳເນີດ ແລະ ການຂະຫຍາຍຕົວຂອງວຽກງານປະກັນສັງຄົມຂອງປະເທດໃດໜຶ່ງແມ່ນຕິດພັນກັບຂະບວນວິວັດ ແລະ ການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ສັງຄົມຂອງປະເທດນັ້ນ. ເວົ້າລວມແລ້ວວຽກງານປະກັນສັງຄົມແມ່ນເພື່ອປົກປ້ອງຊາວຜູ້ອອກແຮງງານ ຫຼື ສະມາຊິກຂອງລະບົບປະກັນສັງຄົມທີ່ປະເຊີນກັບບັນດາຄວາມສ່ຽງຂອງສັງຄົມເປັນຕົ້ນແມ່ນຄວາມສ່ຽງພາໃຫ້ເກີດມີການໃຊ້ຈ່າຍເພື່ອດູແລ ແລະ ປິ່ນປົວສຸຂະພາບ, ຄວາມສ່ຽງທີ່ພາໃຫ້ເກີດການຂາດລາຍຮັບໃນການລ້ຽງຊີບ ເປັນຕົ້ນແມ່ນການພັກວຽກຍ້ອນເຈັບເປັນ, ຕົກງານ, ເກີດລູກ, ລ້ຽງລູກນ້ອຍ, ເສຍອົງຄະ, ກະສຽນບຳນານ, ເສຍຊີວິດ.

ການປະກັນສັງຄົມຂອງບັນດາປະເທດໃນທະວີບຢູໂຣບ ແມ່ນເກີດຂື້ນໃນໄລຍະທີ່ສັງຄົມຂອງບັນດາປະເທດດັ່ງກ່າວກ້າວເຂົ້າສູ່ສັງຄົມອຸດສາຫະກຳ ຊຶ່ງຊາວຜູ້ອອກແຮງງານຕ້ອງໄດ້ດຳລົງຊີວິດຫ່າງໄກຈາກຄອບຄົວ ແລະ ອາໄສເງິນເດືອນເປັນແຫຼ່ງລາຍຮັບຕົ້ນຕໍໃນການດຳລົງຊີວິດ. ໃນການປະເຊີນກັບສະພາບການດັ່ງກ່າວ ເຮັດໃຫ້ກູ່ມຜູ້ອອກແຮງງານໄດ້ຫາວິທີເພື່ອຊ່ວຍເຫຼືອກັນໃນເວລາທີ່ເຂົາເຈົ້າປະເຊີນກັບບັນຫາຕ່າງໆໃນຊີວິດປະຈຳວັນ ເຊັ່ນ: ເວລາເຈັບປ່ວຍ, ເສຍຊີວິດ ແລະ ອື່ນໆ ອັນເປັນສາເຫດໃຫ້ກຸ່ມຜູ້ອອກແຮງງານດັ່ງກ່າວໄດ້ພ້ອມກັນສ້າງກອງທຶນຊ່ວຍເຫຼືອຊຶ່ງກັນ ແລະ ກັນຂື້ນ (Mutuality). ກອງທຶນດັ່ງກ່າວໄດ້ເກີດຂື້ນແບບສະໝັກໃຈ, ກະແຈກກະຈາຍ, ບໍ່ມີວິທະຍາສາດໃນການຈັດສັນກໍ່ຄືການຄຸ້ມຄອງກອງທຶນ ເຮັດກອງທຶນບໍ່ມີຄວາມຍືນຍົງ, ຜູ້ອອກແຮງງານບໍ່ໄດ້ຮັບການປົກປ້ອງຢ່າງເປັນເອກະພາບ; ບັນຫາດັ່ງກ່າວເຮັດໃຫ້ລັດຖະບານເຫັນໄດ້ຄວາມຈຳເປັນຕ້ອງເຂົ້າມາມີສ່ວນຮ່ວມໃນການບໍລິຫານກອງທຶນ ແລະ ຄຸ້ມຄອງຄວາມສ່ຽງຕ່າງໆ ໃຫ້ແກ່ຜູ້ອອກແຮງງານຢ່າງທົ່ວເຖິງ. ການມາມີສ່ວນຮ່ວມຂອງລັດຖະບານນີ້ແມ່ນຈຸດເລີ່ມຕົ້ນຂອງການກຳເນີດລະບົບປະກັນສັງຄົມ.

ການສ້າງລະບົບປະກັນສັງຄົມແມ່ນອີງໃສ່ສະພາບທາງດ້ານເສດຖະກິດ ແລະ ສັງຄົມເປັນພື້ນຖານ ຊຶ່ງການຈັດສັນກອງທຶນສາມາດເຮັດໄດ້ຫຼາຍຮູບການ ເປັນຕົ້ນແມ່ນລະບົບແຜນງົບປະມານ (Pay As You Go), ລະບົບເງິນສົມທົບເປັນຫຼັກ(Defined Contribution), ລະບົບເງິນອຸດໜູນເປັນຫຼັກ (Defined Contribution) ແລະ ອື່ນໆ. ການສ້າງລະບົບປະກັນສັງຄົມໃນຍຸກປະຈຸບັນສ່ວນໃຫຍ່ແມ່ນອີງໃສ່ຫຼັກການການປະກັນໄພ ໂດຍມີການສະເລ່ຍຄວາມສ່ຽງຂອງຜູ້ປະກັນຕົນ ເພື່ອຮັບປະກັນຄວາມຍືນຍົງຂອງກອງທຶນ ແລະ ສິດທິຂອງສະມາຊິກຂອງກອງທຶນ. ລະບົບປະກັນສັງຄົມຂອງບັນດາປະເທດໃນກຸ່ມສະຫະພາບຢູໂຣບ ສ່ວນໃຫຍ່ແລ້ວແມ່ນແບ່ງອອກເປັນ 3 ລະດັບຄື: (1) ລະດັບພື້ນຖານ (Compulsory Social Security Scheme), (2)

ລະດັບກຸ່ມອາຊີບ (Occupational Social Security Scheme) ແລະ (3) ລະດັບສະໝັກໃຈ (Voluntary Private Insurance). ລະດັບພື້ນຖານແມ່ນລະບົບພາກບັງຄັບສຳລັບຜູ້ອອກແຮງງານທຸກຄົນ ແລະ ໃຫ້ການອຸດໜູນໃນຂັ້ນພື້ນຖານທີ່ເໝາະສົມໂດຍອີງໃສ່ຄວາມສາມາດຈ່າຍຂອງກອງທຶນ ແລະ ລະດັບການດຳລົງຊີວິດ. ລະບົບປະກັນສັງຄົມລະດັບພື້ນຖານນີ້ບໍ່ແມ່ນລະບົບສັງຄົມສົງເຄາະ (Social Welfare System) ຜູ້ອອກແຮງງານທີ່ຕົກອອກຈາກການຄຸ້ມຄອງຂອງລະບົບພື້ນຖານນີ້ຈຶ່ງໄປຢູ່ໃນກຸ່ມຄົນທີ່ລະບົບສັງຄົມສົງເຄາະຄູ້ມຄອງ. ລະບົບປະກັນສັງຄົມລະດັບກຸ່ມອາຊີບນີ້ແມ່ນເປັນລະບົບໜຶ່ງເພື່ອໃຫ້ການປົກປ້ອງເພີ່ມຈາກລະບົບພື້ນຖານ, ເປັນການສ້າງເງື່ອນໄຂໃຫ້ຜູ້ອອກແຮງງານໃນກຸ່ມວິສາຫະກິດທີ່ມີຄວາມສ່ຽງສະເພາະໃດໜຶ່ງໄດ້ຮັບການປົກປ້ອງເພີ່ມ(ລະບົບນີ້ບາງປະເທດກໍ່ຖືວ່າເປັນລະບົບພາກບັງຄັບລະດັບ 2 ຈາກລະບົບຂັ້ນພື້ນຖານ). ລະບົບປະກັນສັງຄົມລະດັບສະໝັກໃຈ ແມ່ນລະບົບທີ່ຜູ້ອອກແຮງງານໃນກຸ່ມເປົ້າໝາຍລະບົບລະດັບທີ່ 1 ຫຼື ລະດັບ 2 ທີ່ໄດ້ກ່າວມານັ້ນສາມາດປະກັນຕົນດ້ວຍຄວາມສະໝັກໃຈເພື່ອໄດ້ຮັບການປົກປ້ອງ ຫຼື ຜົນປະໂຫຍດເພີ່ມຈາກລະບົບພາກບັງຄັບ.

ລະບົບປະກັນສັງຄົມຢູ່ ສປປລາວ ໃນປະຈຸບັນມີ 2 ລະບົບໃນນັ້ນແມ່ນລະບົບປະກັນສັງຄົມພາກລັດຖະກອນ ແລະ ລະບົບປະກັນສັງຄົມພາກວິສາຫະກິດ; ທັງສອງລະບົບແມ່ນເຄື່ອນໄຫວຢູ່ພາຍໃຕ້ການຊີ້ນຳຂອງລັດຖະມົນຕີວ່າການກະຊວງແຮງງານ ແລະ ສະຫັວດດີການສັງຄົມ. ລະບົບພາກລັດຖະກອນໃຫ້ການຄຸ້ມຄອງແກ່ພະນັກງານ, ທະຫານ, ຕຳຫຼວດ ທີ່ໄດ້ຮັບເງິນເດືອນຈາກງົບປະມານແຫ່ງຊາດ ໂດຍແມ່ນ **<u>ກົມປະກັນສັງຄົມ</u>** ເປັນຜູ້ຈັດຕັ້ງປະຕິບັດ. ລະບົບພາກວິສາຫະກິດໃຫ້ການຄຸ້ມຄອງແກ່ຜູ້ອອກແຮງງານທີ່ເຮັດວຽກນຳບັນດາບໍລິສັດ ຫຼື ວິສາຫະກິດຕ່າງໆ ໂດຍແມ່ນ **<u>ອົງການປະກັນສັງຄົມ</u>** (ອປສ) ເປັນຜູ້ຈັດຕັ້ງປະຕິບັດ. ອປສ ເປັນອົງການໜຶ່ງທີ່ມີຖານະທຽບເທົ່າກົມ ແລະ ມີສະພາບໍລິຫານທີ່ປະກອບດ້ວຍຜູ້ຕາງໜ້າຈາກຜູ້ໃຊ້ແຮງງານ 4 ທ່ານ, ຕາງໜ້າຜູ້ອອກແຮງງານ 4 ທ່ານ ແລະ ຕາງໜ້າລັດຖະບານ 3 ທ່ານ. ລະບົບປະກັນສັງຄົມພາກວິສາຫະກິດຂອງລາວເຮົາໃນປະຈຸບັນ ຖ້າທຽບໃສ່ລະບົບປະກັນສັງຄົມຂອງບັນດາປະເທດທີ່ພັດທະນາແລ້ວ ແມ່ນຖືວ່າເປັນລະບົບພາກບັງຄັບຂັ້ນພື້ນຖານ ຊຶ່ງໝາຍຄວາມວ່າທຸກວິສາຫະກິດກຸ່ມເປົ້າໝາຍ (ວິສາຫະກິດທີ່ມີຜູ້ອອກແຮງງານ 10 ຄົນຂື້ນໄປ) ຕ້ອງໄດ້ເຂົ້າຮ່ວມລະບົບປະກັນສັງຄົມພາກວິສາຫະກິດຕາມທີ່ໄດ້ບັນຍັດຢູ່ໃນດຳລັດ 207/ນຍ ແລະ ພາຍຫຼັງທີ່ເຂົ້າເປັນສະມາຊິກ ອປສ ແລ້ວ ຖ້າວ່າວິສາຫະກິດໃດທີ່ມີຄວາມສາມາດທາງດ້ານເສດຖະກິດ ຢາກໃຫ້ຜູ້ອອກແຮງງານຂອງຕົນມີສະຫວັດດີການເພີ່ມຈາກນະໂຍບາຍອຸດໜູນຂອງ ອປສ ການສ້າງລະບົບໃຫ້ນະໂຍບາຍເພີ່ມນີ້ ເມື່ອທຽບໃສ່ລະບົບປະກັນສັງຄົມຂອງບັນດາປະເທດພັດທະນາແລ້ວແມ່ນຖືວ່າເປັນລະບົບ <u>ລະດັບສະໝັກໃຈ</u>